# ດີໃຈທີ່ໄດ້ພົບກັນ

ເວລາຄົບຮອບໄດ້    ສາມສິບກວ່າປີປາຍ
ຫຼາຍຄົນວຽນມາພົບ   ຈວບກັນໃນວັນນີ້
ໂອກາດດີຈຶ່ງເຫັນຫນ້າ  ວາສນາເຮົາມີຈຶ່ງພົບກັນອີກຄັ້ງໃຫມ່
ຍ້ອນແຮງໃຈທຸກທົ່ວຫນ້າ   ໄດ້ລອຍຟ້າເວີ່ນມາ ທ່ານເອີຍ

ໂອນໍ ! ທຸກຄົນປ່ອຍລູກຖ້າ   ນຳຍາດເຜົ່າພົງສາ
ບາງຄົນລາເມັຽຮັກ       ອາທິດດຽວອ້າຍກັບບ້ານ
ສ່ວນວ່າຈັບເພັງນ້ອງ    ຜົວຄອງຄອຍເອົາໃຈໃສ່
ລູງໄວໄດ້ນັ່ງຖ້າ        ລໍເມັຽແກ້ວຊິຕ່າວມາ

ສອງຜົວເມັຽມຸ້ງຫນ້າຕັ້ງ   ພະລັງຮ່ວມຮວມແນວຄິດ
ຈິດເພີດເພີນຊິມາງານ    ເພີ່ນປ່ອຍຫຼານຢູ່ທາງບ້ານ
ຫຼາຍຄົນມີງານຫຍຸ້ງ       ລຸງລັງເພີ່ນເອົ້າອັ່ງ
ກໍເລີຍໄດ້ແຕ່ນັ່ງໃຫ້       ບໍ່ຫວັງໄດ້ພົບແຟນ

ບາງຄົນເພີ່ນຍິ້ມແປ້ນ    ຈຶ່ງຟ້າວແລ່ນຕອນເມັຽເຜີ
ຫວັງຊິເຈີຄົນຮັກ          ອະດີດຮຽນຄາວນັ້ນ
ຕຽມຂອງຂວັນຊິມາໃຫ້   ດີໃຈຫຼາຍເຫັນຊູ້ເກົ່າ

ບາດຕອນກັບຕ່າວບ້ານ ຢ້ານຫຼົງໃຫ້ໃສ່ເມັງ ເດນໍ

ສຸກໃຈເດນີ້ນີ້ ຈັກບຸນສົ່ງແຕ່ປາງໃດ?
ເຮົາມີໃຈກົມກຽວ ຈຶ່ງກ່ຽວວົນວຽນພໍ້
ນີ້ລະນໍຄົນເຂົາເວົ້າ ໂລກາເຮົານີ້ເຫມືອນໄຂ່
ໄຫຼໄປຮອດຂ້າງຫນ້າ ພັດມາໂຄ້ງຕ່າວຫຼັງ ທ່ານເອີຍ

ໂດຍ ສາວຫູັກເຈັດ ສີພັນດອນ ສີດາວົງ